ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງກະສິກຳ ແລະ ປ່າໄມ້ ເລກທີ 1146/ກປ.

ນະຄອນຫຼວງວຽງຈັນ, ວັນທີ 20 MAR 2024

# ແຈ້ງການ

ເຖິງ: - ຫ້ອງການ, ບັນດາກົມ, ສະຖາບັນ ອ້ອມຂ້າງກະຊວງກະສິກຳ ແລະ ປ່າໄມ້;

- ພະແນກກະສິກຳ ແລະ ປ່າໄມ້ ແຂວງ, ນະຄອນຫຼວງວຽງຈັນ ໃນຂອບເຂດ ທົ່ວປະເທດ.

**ເລື່ອງ:** ການຂຶ້ນທະບຽນອາຫານສັດ ແລະ ຢາສັດຕະວະແພດ.

- ອີງຕາມ ກົດໝາຍ ວ່າດ້ວຍ ການລ້ຽງສັດ ແລະ ການສັດຕະວະແພດ (ສະບັບປັບປຸງ) ສະບັບເລກທີ 08/ສພຊ, ລົງວັນທີ 11 ພະຈິກ 2016;
- ອີງຕາມ ດຳລັດ ວ່າດ້ວຍ ອາຫານສັດ ສະບັບເລກທີ 02 /ລບ, ລົງວັນທີ 02 ມັງກອນ 2020;
- ອີງຕາມ ດຳລັດ ວ່າດ້ວຍ ຢາສັດຕະວະແພດ ສະບັບເລກທີ 199/ລບ, ລົງວັນທີ 13 ມີນາ 2020;
- ອີງຕາມ ດຳລັດ ຂອງນາຍົກລັດຖະມົນຕີ ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງກະຊວງກະສິກຳ ແລະ ປ່າໄມ້ ສະບັບເລກທີ 603/ນຍ, ລົງວັນທີ 15 ຕຸລາ 2021;
- ອີງຕາມ ໜັງສືສະເໜີ ຂອງກົມລ້ຽງສັດ ແລະ ການປະມົງ ສະບັບເລກທີ 0698/ກລປ, ລົງວັນທີ 26 ກຸມພາ 2024;
- ອີງຕາມ ການຄົ້ນຄວ້າ ແລະ ນຳສະເໜີ ຂອງຫ້ອງການກະຊວງກະສິກຳ ແລະ ປ່າໄມ້ ລົງວັນທີ 29 ກຸມພາ 2024.

ກະຊວງກະສິກຳ ແລະ ປ່າໄມ້ ຂໍຖືເປັນກຽດແຈ້ງມາຍັງທ່ານ ຊາບວ່າ: ໃນໄລຍະຜ່ານມາ ການຈັດຕັ້ງປະຕິບັດວຽກງານຄຸ້ມຄອງ ອາຫານສັດ ແລະ ຢາສັດຕະວະແພດ ຢູ່ ສປປ ລາວ ແມ່ນປະຕິບັດໄດ້ດີພໍສົມຄວນ ໂດຍສະເພາະວຽກງານ ຊຸກຍູ້ ສົ່ງເສີມການຜະລິດ ແລະ ນຳໃຊ້ ອາຫານສັດ ແລະ ຢາສັດຕະວະແພດ ເຂົ້າໃນວຽກງານລ້ຽງສັດໄດ້ມີການຂະຫຍາຍຕົວ ແລະ ນັບມື້ນັບເພີ່ມຂຶ້ນ. ເພື່ອເປັນການຄຸ້ມຄອງການຜະລິດ, ນຳເຂົ້າ, ຈຳໜ່າຍ ແລະ ການນຳໃຊ້ອາຫານສັດ ແລະ ຢາສັດຕະວະແພດ ຢູ່ ສປປ ລາວ ມີຄຸນນະພາບ, ປອດໄພ ແລະ ໄດ້ມາດຕະຖານ ບໍ່ສົ່ງຜົນກະທົບຕໍ່ສຸຂະພາບຂອງຄົນ, ສັດ ແລະ ສິ່ງແວດລ້ອມ ປະກອບສ່ວນເຂົ້າໃນແຜນງານຄ້ຳປະກັນສະບຽງອາຫານ ແລະ ຜະລິດເປັນສິນຄ້າ ໃຫ້ເພີ່ມຂຶ້ນທາງດ້ານປະລິມານ ແລະ ຄຸນນະພາບ ຕາມທິດກະສິກຳສະອາດ, ສີຂຽວ ແລະ ຍືນຍົງ, ເຊື່ອມໂຍງກັບພາກພື້ນ ແລະ ສາກົນ ແລະ ເພື່ອໃຫ້ມີຄວາມເປັນເອກະພາບ ໃນການຄຸ້ມຄອງວຽກງານ ອາຫານສັດ ແລະ ຢາສັດຕະວະແພດ ໃນຂອບເຂດທົ່ວປະເທດ.

## ລັດຖະມົນຕີ ກະຊວງກະສິກຳ ແລະ ປ່າໄມ້ ອອກແຈ້ງການ:

1. ໃຫ້ຫ້ອງການ, ບັນດາກົມ, ສະຖາບັນ, ພະແນກກະສິກຳ ແລະ ປ່າໄມ້ ແຂວງ, ນະຄອນຫຼວງວຽງຈັນ ປະສານສົມທົບກັບ ພາກສ່ວນທີ່ກ່ຽວຂ້ອງ ຈັດຕັ້ງການໂຄສະນາເຜີຍແຜ່ ແຈ້ງການສະບັບນີ້ ແລະ ນິຕິກຳອື່ນທີ່

ກ່ຽວຂ້ອງ ໃຫ້ການຈັດຕັ້ງ ທັງພາກລັດ, ເອກະຊົນ ແລະ ຜູ້ປະກອບການ ໃນຂອບເຂດທົ່ວປະເທດ ຊາບ ກ່ຽວກັບ ຄວາມສຳຄັນ ແລະ ຈຳເປັນ ໃນການຂຶ້ນທະບຽນ ອາຫານສັດ ແລະ ຢາສັດຕະວະແພດ ທີ່ນຳໃຊ້ໃນ ສປປ ລາວ;

2. ໃຫ້ພະແນກກະສິກຳ ແລະ ປ່າໄມ້ ແຂວງ, ນະຄອນຫຼວງວຽງຈັນ ແຈ້ງການ ໃຫ້ບັນດາ ຜູ້ປະກອບການກ່ຽວກັບການຜະລິດ, ນຳເຂົ້າ ແລະ ຈຳໜ່າຍ ອາຫານສັດ ແລະ ຢາສັດຕະວະແພດ ນຳເອົາຜະລິດຕະພັນຂອງຕົນ ມາຂຶ້ນທະບຽນ ນຳກົມລ້ຽງສັດ ແລະ ການປະມົງ ໃຫ້ສຳເລັດກ່ອນ ວັນທີ 30 ມິຖຸນາ 2024;
3. ໃນກໍລະນີ ເຈົ້າໜ້າທີ່ສັດຕະວະແພດ ປະຈຳດ່ານ ຫາກພົບເຫັນ ຜູ້ນຳເຂົ້າ ອາຫານສັດ ແລະ ຢາສັດຕະວະແພດ ໃຫ້ແນະນຳໃຫ້ຜູ້ປະກອບການດັ່ງກ່າວ ນຳເອົາຜະລິດຕະພັນຂອງຕົນ ມາຂຶ້ນທະບຽນ ນຳກົມລ້ຽງສັດ ແລະ ການປະມົງກ່ອນ ຈຶ່ງນຳໄປໃຊ້ ຫຼື ຈຳໜ່າຍ;
4. ໃຫ້ກົມລ້ຽງສັດ ແລະ ການປະມົງ ເປັນເຈົ້າການ ໃນການກວດກາຄຸນນະພາບ ແລະ ຄວາມປອດໄພ ຂອງ ອາຫານສັດ ແລະ ຢາສັດຕະວະແພດ ທີ່ ຜະລິດ, ນຳເຂົ້າ, ຈຳໜ່າຍ ແລະ ນຳໃຊ້ ຢູ່ ສປປ ລາວ ພ້ອມທັງດຳເນີນການຂຶ້ນທະບຽນ ຕາມຂັ້ນຕອນ ແລະ ລະບຽບການ;
5. ໃຫ້ກົມລ້ຽງສັດ ແລະ ການປະມົງ ເປັນເຈົ້າການ ປະສານສົມທົບກັບ ພະແນກກະສິກຳ ແລະ ປ່າໄມ້ ແຂວງ, ນະຄອນຫຼວງວຽງຈັນ ແລະ ພາກສ່ວນທີ່ກ່ຽວຂ້ອງ ໃນການ ຕິດຕາມ, ກວດກາ ການຂຶ້ນທະບຽນ ອາຫານສັດ ແລະ ຢາສັດຕະວະແພດ ທີ່ ຜະລິດ, ນຳເຂົ້າ, ຈຳໜ່າຍ ແລະ ນຳໃຊ້ ຢູ່ ສປປ ລາວ ຢ່າງເປັນປົກກະຕິ;
6. ເມື່ອໄດ້ຮັບແຈ້ງການສະບັບນີ້ແລ້ວ ໃຫ້ທຸກພາກສ່ວນກ່ຽວຂ້ອງ ທັງ ສູນກາງ ແລະ ທ້ອງຖິ່ນ ຮີບຮ້ອນປະສານສົມທົບຊຶ່ງກັນ ແລະ ກັນ ເພື່ອຈັດຕັ້ງປະຕິບັດ ພ້ອມທັງສະຫຼຸບລາຍງານ ແລະ ຖອດຖອນບົດຮຽນ ໃນການຈັດຕັ້ງປະຕິບັດ ເປັນແຕ່ ລະໄລຍະ.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງທ່ານເພື່ອຊາບ ແລະ ປະຕິບັດຕາມແຈ້ງການສະບັບນີ້ຢ່າງເຂັ້ມງວດ.

ລັດຖະມົນຕີ

ປອ. ເພັດ ພົມພິພັກ